ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

2035 /ກອ

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 12 OCT 2010

# ແຈ້ງການ

## ກ່ຽວກັບການຈັດຕັ້ງປະຕິບັດລະບຽບແຫລ່ງກຳເນີດສິນຄ້າ ພາຍໃຕ້ສັນຍາ ວ່າດ້ວຍການຄ້າສິນຄ້າຂອງອາຊຽນ (ATIGA)

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງ ອຸດສາຫະກຳ ແລະການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006.
- ອີງຕາມສັນຍາ ວ່າດ້ວຍການຄ້າສິນຄ້າຂອງອາຊຽນທີ່ກອງປະຊຸມສຸດຍອດອາຊຽນຄັ້ງທີ14 ໄດ້ຮັບຮອງເອົາໃນວັນທີ 26 ກຸມພາ 2009.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22/04/2010
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະສົ່ງອອກ.

### ກະຊວງອຸດສາຫະກຳ ແລະການຄ້າ ອອກແຈ້ງການ ດັ່ງນີ້ :

1. ສິນຄ້າມີສິດໄດ້ຮັບໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ATIGA Form D ແມ່ນສິນຄ້າທີ່ມີແຫລ່ງກຳເນີດໃນອາຊຽນ ແລະຜ່ານຂະບວນການຜະລິດຢ່າງຖືກຕ້ອງຕາມລະບຽບແຫລ່ງກຳເນີດສິນຄ້າພາຍໃຕ້ສັນຍາ ວ່າດ້ວຍການຄ້າສິນຄ້າຂອງອາຊຽນ (ASEAN Trade in Goods Agreement: ATIGA).

2. ມອບໃຫ້ກົມການນຳເຂົ້າ ແລະສົ່ງອອກ (ພະແນກຄຸ້ມຄອງແຫລ່ງກຳເນີດສິນຄ້າ), ພະແນກອຸດສາຫະກຳ ແລະການຄ້ານະຄອນຫລວງ ແລະພະແນກອຸດສາຫະກຳ ແລະການຄ້າແຂວງໃນທົ່ວປະເທດ ມີສິດອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດພາຍໃຕ້ສັນຍາທີ່ກ່າວໄວ້ໃນວັກ1ຂ້າງເທິງ.
3. ເຈົ້າໜ້າທີ່ທີ່ກ່າວໄວ້ໃນວັກ 2 ຂ້າງເທິງສາມາດສືບຕໍ່ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າCEPT Form D ແລະໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ATIGA Form D ຈົນເຖິງ ວັນທີ 17/11/2010. ນັບ

ແຕ່ວັນທີ 18/11/2010 ເປັນຕົ້ນໄປ ໃຫ້ອອກແຕ່ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ATIGA Form D ເທົ່ານັ້ນ.

4. ຜູ້ຜະລິດ ແລະຜູ້ສົ່ງອອກທີ່ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ ຫາກຕ້ອງການໃບຢັ້ງຢືນແຫລ່ງກຳເນີດສິນຄ້າ Form D ເພື່ອນຳໃຊ້ສິດພິເສດທາງການຄ້າ ສາມາດ ຍື່ນຄຳຮ້ອງຕາມແບບຟອມທີ່ໄດ້ກຳນົດໄວ້ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ທີ່ກ່າວໄວ້ໃນວັກ 2 ຂ້າງເທິງ.

5. ມອບໃຫ້ກົມການນຳເຂົ້າ ແລະສົ່ງອອກ ຮ່າງບົດແນະນຳທາງດ້ານວິຊາການຕາມສິດ ແລະໜ້າທີ່ ຂອງຕົນເພື່ອຈັດຕັ້ງປະຕິບັດລະບຽບແຫລ່ງກຳເນີດສິນຄ້າພາຍໃຕ້ສັນຍາທີ່ກ່າວຂ້າງເທິງ ຢ່າງມີປະ ສິດທິຜົນ.

6. ຖ້າວ່າ ມີບັນຫາເກີດຂຶ້ນກ່ຽວກັບ ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໜ່ວຍງານຂອງລັດ ແລະຜູ້ ດຳເນີນທຸລະກິດທີ່ກ່ຽວຂ້ອງ ຄວນລາຍງານຕໍ່ກະຊວງອຸດສາຫະກຳ ແລະການຄ້າ ໃຫ້ໄວເທົ່າທີ່ຈະ ໄວໄດ້ ເພື່ອແກ້ໄຂ ຢ່າງທັນເວລາ.

7. ແຈ້ງການສະບັບນີ້ມີຜົນບັງຄັບໃຊ້ພາຍຫລັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ